**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ:113/ຫກ

ນະຄອນຫຼວງວຽງຈັນ, ວັນທີ11 ພຶດສະພາ 2023

# ແຈ້ງການ

**ເຖິງ:** - ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ, ສາຂາ ທຫລ ປະຈຳພາກ, ທະນາຄານທຸລະກິດລັດ, ເອກະຊົນ ແລະ ສະຖາບັນການເງິນຈຸລະພາກ;

- ນັກຮຽນ, ນັກສຶກສາ, ປັນຍາຊົນ ແລະ ບັນດາທ່ານທີ່ມີຄວາມມັກຮັກໃນການຂຽນ.

**ເລື່ອງ:** ປະກອບສ່ວນສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ພາຍໃນກົມຂອງທ່ານ ເພື່ອລົງໃນວາລະສານ ການທະນາຄານ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ວາລະສານການທະນາຄານ (Bank Journal) ເປັນວາລະສານສະບັບໄຕມາດ, ເລີ່ມຈັດພິມຕັ້ງແຕ່ປີ 2009 ເປັນຕົ້ນມາ ເຊິ່ງຜ່ານມາໄດ້ມີບົດຫຼາຍປະເພດຈາກການປະກອບສ່ວນຢ່າງຕັ້ງໜ້າຂອງພະນັກງານໃນຂະແໜງການທະນາຄານ. ດັ່ງນັ້ນ, ເພື່ອເຮັດໃຫ້ວາລະສານການທະນາຄານ ສະບັບຕໍ່ໆໄປ ມີສີສັນຫຼາກຫຼາຍ ແລະ ມີສ່ວນຮ່ວມຈາກຜູ້ອ່ານຫຼາຍຂຶ້ນ; ຫ້ອງການ ທຫລ ຈຶ່ງຂໍແຈ້ງມາຍັງບັນດາທ່ານທີ່ສົນໃຈເພື່ອສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ທີ່ຕິດພັນກັບຂະແໜງການທະນາຄານ, ເສດຖະກິດ, ການເງິນ-ເງິນຕາ, ບົດແປຈາກພາສາຕ່າງປະເທດ ແລະ ອື່ນໆ ປະກອບເຂົ້າໃນວາລະສານການທະນາຄານໃນສະບັບຕໍ່ໆໄປ ເຊິ່ງບົດທີ່ໄດ້ຮັບການຄັດເລືອກລົງໃນວາລະສານຈະມີຄ່ານາມປາກກາໃຫ້ຕາມຄວາມເໝາະສົມ.

ບົດຕ່າງໆທີ່ສົ່ງມາກະລຸນາບອກແຈ້ງຊື່ຜູ້ຂຽນ ຫຼື ນາມປາກກາ, ເບີໂທ ແລະ ບ່ອນສັງກັດ ໂດຍສົ່ງເປັນເອກະສານ ແລະ ນຳສົ່ງເປັນຟາຍ (file) ມາຍັງໜ່ວຍງານປະຊາສຳພັນ, ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ ໂຕອັກສອນໃຊ້ແມ່ນ Phetsarath OT, ຂະໜາດ 12 ຄວາມຍາວ 1 ໜ້າເຈ້ຍ A4 ຂຶ້ນໄປ ແລະ ມີພາບປະກອບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຜູ້ທີ່ມີຄວາມສົນໃຈ ເພື່ອຮ່ວມສ້າງວາລະສານ ການທະນາຄານ ຂອງພວກເຮົາໄປພ້ອມກັນ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ເພັດສະກາພອນ ແກ້ວວົງວິຈິດ**

**ຜູ້ປະສານງານ:**

**ທ ສົມພົດ ທຳມະວົງ 020 28039404**

**ນ ທິດສະບາ ທຳມະວົງສີ 020 77979520**